ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ 1600 /ກຊສ

# ຂໍ້ກຳນົດວ່າດ້ວຍການຈົດທະບຽນອາຫານ

- ອີງຕາມ ໃບແຈ້ງການຂອງຫ້ອງວ່າການສະພາລັດຖະມົນຕີ ເລກທີ 1675/ຫສລ, ລົງວັນທີ05/12/91 ກ່ຽວກັບການເຫັນດີປະກາດໃຊ້ຂໍ້ກຳນົດ ກ່ຽວກັບການຄຸ້ມຄອງອາຫານຂອງຄະນະກຳມະການຄຸ້ມຄອງອາຫານ ແລະ ຢາ.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສປປລາວ ວ່າດ້ວຍການຈັດຕັ້ງຂອງກະຊວງສາທາລະນະສຸກ ເລກທີ 73/ນຍ, ລົງວັນທີ 10/05/1993.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກຕົກລົງອອກກົດລະບຽບ**

**ວ່າດ້ວຍການຂຶ້ນທະບຽນອາຫານດັ່ງລຸ່ມນີ້:**

## ໝວດທີ I

## ຄວາມໝາຍ ແລະ ຫຼັກການລວມ

**ມາດຕາ 1.** ການຈົດທະບຽນຜະລິດຕະພັນອາຫານ ແລະ ເຄື່ອງດື່ມຕໍ່ໄປເອີ້ນວ່າການຈົດທະບຽນອາຫານ, ແມ່ນການແຈ້ງຫຼັກສູດຕຳລາອາຫານເປັນລາຍລັກອັກສອນ ເຊິ່ງໝາຍເຖິງການສະແດງລາຍການ ຂອງວັດຖຸທີ່ໃຊ້ເປັນສ່ວນປະກອບຂອງອາຫານ, ໃນນັ້ນໄດ້ລະບຸນ້ຳໜັກ ຫຼື ປະລິມານຂອງແຕ່ລະລາຍການຢ່າງຈະແຈ້ງ.

**ມາດຕາ 2.** ການຈົດທະບຽນອາຫານມີຈຸດປະສົງ ເພື່ອເກັບກຳສະຖິຕິ ແລະ ການຄຸ້ມຄອງການເຄື່ອນໄຫວການຜະລິດ, ການນຳເຂົ້າ, ການສົ່ງອອກ, ການຈຳໜ່າຍ, ການຈໍລະຈອນ, ແຈກຢາຍຜະລິດຕະພັນອາຫານ ທີ່ຜະລິດພາຍໃນ ແລະ ນຳເຂົ້າມາຈາກຕ່າງປະເທດ, ເພື່ອສ້າງເງື່ອນໄຂໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ສາມາດຕິດຕາມ ແລະ ກວດກາຄຸນນະພາບຂອງຜະລິດຕະພັນອາຫານ ແລະ ເພື່ອໃຫ້ສູດຕຳລາຂອງຜະລິດຕະພັນເຫຼົ່ານັ້ນມີຄຸນຄ່າທາງດ້ານກົດໝາຍ, ແນໃສ່ປົກປ້ອງຜູ້ບໍລິໂພກ ແລະ ຮັກສາລິຂະສິດຂອງຜູ້ເປັນເຈົ້າຂອງສູດຕຳລາດັ່ງກ່າວ.

**ມາດຕາ 3.** ຜູ້ທີ່ເປັນເຈົ້າຂອງສູດຕຳລາຂອງຜະລິດຕະພັນອາຫານທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າມາຈາກຕ່າງປະເທດທີ່ມີຈຸດປະສົງຢາກຜະລິດ, ຈຳໜ່າຍຜະລິດຕະພັນອາຫານພາຍໃນ ສປປ ລາວ ລ້ວນແຕ່ຕ້ອງໄດ້ຈົດທະບຽນອາຫານນຳກົມອາຫານ ແລະ ຢາ ຂອງກະຊວງສາທາລະນະສຸກ, ທັງນີ້ກໍ່ເພື່ອຫຼີກເວັ້ນການປອມແປງຜະລິດຕະພັນຈາກຄົນອື່ນ.

**ມາດຕາ 4.**

1. ຜະລິດຕະພັນອາຫານທີ່ຕ້ອງຈົດທະບຽນ ແມ່ນຜະລິດຕະພັນປຸງແຕ່ງສຳເລັດຮູບ ແລະ ເຄິ່ງສຳເລັດຮູບທີ່ໄດ້ອະນຸຍາດໃຫ້ຜະລິດຈາກຂະແໜງອຸດສາຫະກຳ ແລະ ໄດ້ຮັບອະນຸຍາດໃຫ້ນຳເຂົ້າຈາກຂະແໜງການຄ້າຕາມລຳດັບ.

2. ສຳລັບຜະລິດຕະພັນອາຫານໃດ ທີ່ບໍ່ມີຕົວແທນຈຳໜ່າຍໃນ ສປປລາວ ໃຫ້ບໍລິສັດຜູ້ຜະລິດ (ບໍລິສັດແມ່) ເປັນຜູ້ນຳມາຈົດທະບຽນ ຫຼື ມອບສິດເປັນລາຍລັກອັກສອນໃຫ້ບຸກຄົນ ຫຼື ນິຕິບຸກຄົນເປັນຜູ້ນຳມາຈົດທະບຽນກໍ່ໄດ້.

## ໝວດທີ II
## ວ່າດ້ວຍການຍື່ນເອກະສານ

**ມາດຕາ 5. ເອກະສານທີ່ຕ້ອງຍື່ນຂໍຈົດທະບຽນອາຫານ ທີ່ຜະລິດພາຍໃນປະເທດ ມີຄື:**

1. ຄຳຮ້ອງຂໍຂຶ້ນທະບຽນສູດຕຳລາຜະລິດຕະພັນອາຫານ (ຕາມແບບຟອມອ/ທ 1);
2. ກຳມະວິທີໃນການປຸງແຕ່ງ (ຂັ້ນຕອນໃນການປຸງແຕ່ງ);
3. ສະຫຼາກຂອງຜະລິດຕະພັນ;
4. ໃບອະນຸຍາດດຳເນີນທຸລະກິດ ອອກໃຫ້ໂດຍຂະແໜງອຸດສາຫະກຳ;
5. ຕົວຢ່າງຜະລິດຕະພັນທີ່ບັນຈຸຢູ່ໃນຫົວໜ່ວຍມັດທໍ່ເດີມ (ສ່ວນປະລິມານຕົວຢ່າງແມ່ນຂຶ້ນກັບລາຍການວິເຄາະເບິ່ງ Annex I);
6. ຜົນຂອງການກວດວິເຄາະອາຫານ ຈາກຫ້ອງທົດລອງທີ່ທາງການຮັບຮູ້ຕາມແຕ່ລະກໍລະນີ.

**ມາດຕາ 6. ເອກະສານທີ່ຕ້ອງຍື່ນຂໍຈົດທະບຽນອາຫານ ທີ່ຜະລິດມາຈາກຕ່າງປະເທດ ມີຄື:**

1. ຄຳຮ້ອງຂໍຂຶ້ນທະບຽນ, ສູດຕຳລາຜະລິດຕະພັນອາຫານ (ຕາມແບບຟອມອ/ທ 2);
2. ໃບຢັ້ງຢືນຄຸນນະພາບ (Health Certificate) ຈາກອົງການທີ່ມີອຳນາດກ່ຽວຂ້ອງຂອງປະເທດຜູ້ຜະລິດ;
3. ໃບຢັ້ງຢືນຜົນວິເຄາະ ພ້ອມດ້ວຍວິທີການວິເຄາະຈາກຫ້ອງທົດລອງທີ່ຮັບຮູ້ຢ່າງເປັນທາງການຂອງປະເທດຜູ້ຜະລິດ ເຊັ່ນ:
   - Analysis certificate;
   - Microbiology certificate;
   - Filth and Extraneous Matter Certificate;
   - Sanitary Certificate;
   - Mycotoxin Certificate;
   - Heavy Metal Certificate;
   - Phytosanitary Certificate;
   - Certificate of age.

   ໃບຢັ້ງຢືນຕ່າງໆທີ່ກ່າວມານີ້ ແມ່ນຂຶ້ນນຳແຕ່ລະຊະນິດອາຫານ.
4. ໃບອະນຸຍາດໃຫ້ຂາຍທົ່ວໄປຂອງປະເທດຜູ້ຜະລິດ ຫຼື ປະເທດຜູ້ສົ່ງອອກ (Certificate of Free sale)
5. ຕົວຢ່າງຜະລິດຕະພັນອາຫານທີ່ບັນຈຸ ຢູ່ໃນຫົວໜ່ວຍມັດທໍ່ເດີມ (ສ່ວນປະລິມານຂອງຕົວຢ່າງແມ່ນຂຶ້ນກັບລາຍການວິເຄາະເບິ່ງ (Annex I)
6. ສະຫຼາກຜະລິດຕະພັນອາຫານທີ່ຂຽນເປັນພາສາລາວ ພ້ອມດ້ວຍເລກທີຈົດທະບຽນຂອງ ສປປ ລາວ.

## ໝວດທີ III
## ວ່າດ້ວຍຄ່າທຳນຽມການຈົດທະບຽນ

**ມາດຕາ 7.** ຄ່າທຳນຽມການຈົດທະບຽນຜະລິດຕະພັນອາຫານ ທີ່ຜະລິດພາຍໃນປະເທດແມ່ນຄິດໄລ່ເອົາຕາມມູນຄ່າໃບບິນຂອງຫ້ອງທົດລອງທີ່ທາງການກຳນົດ ແລະ ບວກໃສ່ 5000 ກີບ.

**ມາດຕາ 8.** ຄ່າທຳນຽມການຈົດທະບຽນຜະລິດຕະພັນອາຫານ ທີ່ຜະລິດມາຈາກຕ່າງປະເທດແມ່ນຄິດໄລ່ເອົາຕາມມູນຄ່າໃບບິນຂອງຫ້ອງທົດລອງທີ່ທາງການກຳນົດ ແລະ ບວກໃສ່ 20,000 ກີບ.

**ມາດຕາ 9. ຄ່າທຳນຽມການຕໍ່ອາຍຸໃບທະບຽນ:**

- ສຳລັບຜະລິດຕະພັນອາຫານທີ່ຜະລິດພາຍໃນປະເທດ = 2,500 ກີບ
- ສຳລັບຜະລິດຕະພັນອາຫານທີ່ຜະລິດມາຈາກຕ່າງປະເທດ = 10,000 ກີບ

## ໝວດທີ IV

## ວ່າດ້ວຍການກຳນົດເວລາການພິຈາລະນາຈົດທະບຽນອາຫານ

**ມາດຕາ 10.** ການອອກໃບທະບຽນຜະລິດຕະພັນອາຫານ ຈະພິຈາລະນາໄດ້ກໍ່ຕໍ່ເມື່ອເອກະສານຄົບຖ້ວນ ຕາມກຳນົດໄວ້ໃນມາດຕາ 5 ແລະ ມາດຕາ 6 ຂອງຂໍ້ກຳນົດສະບັບນີ້ ຫຼື ກໍ່ຕໍ່ເມື່ອເຈົ້າຂອງຜະລິດຕະພັນ ທາກຕອບສະໜອງຂໍ້ມູນຕ່າງໆຢ່າງຄົບຖ້ວນຕາມຂັ້ນຕອນຂອງການພິຈາລະນາ.

1. ສຳລັບຜະລິດຕະພັນອາຫານ ທີ່ຜະລິດພາຍໃນປະເທດຈະອອກໃຫ້ພາຍໃນ 60 ວັນ, ນັບແຕ່ມື້ສົ່ງເອກະສານເຖິງກົມອາຫານ ແລະ ຢາ.
2. ສຳລັບຜະລິດຕະພັນອາຫານ ທີ່ຜະລິດມາຈາກຕ່າງປະເທດຈະອອກໃຫ້ພາຍໃນ 120ວັນ, ນັບແຕ່ມື້ສົ່ງເອກະສານເຖິງກົມອາຫານ ແລະ ຢາ.

## ໝວດທີ V

## ວ່າດ້ວຍການລົບລ້າງ ແລະ ການຕໍ່ອາຍຸໃບທະບຽນ

**ມາດຕາ 11.** - ໃບທະບຽນຜະລິດຕະພັນອາຫານມີກຳນົດການໃຊ້ 02 ປີນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

- 90ວັນ ກ່ອນໝົດອາຍຸການນຳໃຊ້ໃບຈົດທະບຽນ, ເຈົ້າຂອງຜະລິດຕະພັນອາຫານຕ້ອງມາຂໍຕໍ່ອາຍຸການຈົດທະບຽນໃໝ່.

**ມາດຕາ 12.** ໃບຈົດທະບຽນຜະລິດຕະພັນອາຫານ ອາດຖືກລົບລ້າງໃນກໍລະນີດັ່ງລຸ່ມນີ້:

- ຜູ້ກ່ຽວບໍ່ມາຕໍ່ອາຍຸໃບຈົດທະບຽນພາຍຫຼັງໝົດອາຍຸການນຳໃຊ້ 30 ວັນ.
- ຜົນວິໄຈສະແດງໃຫ້ເຫັນວ່າຄຸນນະພາບຂອງຜະລິດຕະພັນອາຫານບໍ່ບັນລຸຕາມມາດຕະຖານທີ່ໄດ້ຈົດທະບຽນໄວ້.
- ບໍ່ປອດໄພຕໍ່ສຸຂະພາບຂອງຜູ້ບໍລິໂພກໂດຍການແຈ້ງການຂອງປະເທດຜູ້ຜະລິດ ຫຼື ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ.

## ໝວດທີ VI

## ວ່າດ້ວຍຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 13.** ຫ້າມບຸກຄົນ ຫຼື ນິຕິບຸກຄົນໃດປອມແປງສູດຕຳລາປຸງແຕ່ງອາຫານທີ່ໄດ້ຈົດທະບຽນກ່ອນແລ້ວ.

**ມາດຕາ 14.** ຫ້າມບຸກຄົນ ຫຼື ນິຕິບຸກຄົນໃດຜະລິດອາຫານສຳເລັດຮູບ ແລະ ເຄິ່ງສຳເລັດຮູບເພື່ອຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງອຸດສາຫະກຳ ແລະ ບໍ່ໄດ້ຈົດທະບຽນນຳກົມອາຫານ ແລະ ຢາ.

**ມາດຕາ 15.** ຫ້າມບຸກຄົນ ຫຼື ນິຕິບຸກຄົນໃດນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນອາຫານສຳເລັດຮູບ ແລະ ເຄິ່ງສຳເລັດຮູບເພື່ອຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການຄ້າ ແລະ ບໍ່ໄດ້ຈົດທະບຽນນຳກົມອາຫານ ແລະ ຢາ.

**ມາດຕາ 16.** ຖ້າບຸກຄົນ ຫຼື ນິຕິບຸກຄົນໃດລະເມີດຕໍ່ມາດຕາ 13-14 ຫຼື 15 ຂອງຂໍ້ກຳນົດສະບັບນີ້:

- ຄັ້ງທີ 1 ຈະຖືກກ່າວເຕືອນ

- ຄັ້ງທີ 2 ຈະຖືກປັບໄໝ 50,000 ກີບ ຕໍ່ໜຶ່ງລາຍການ, ພ້ອມທັງຢຶດຜະລິດຕະພັນດັ່ງກ່າວ.
- ຄັ້ງທີ 3 ຈະຖືກປັບໄໝ 50,000 ກີບ ຕໍ່ໜຶ່ງລາຍການ, ພ້ອມທັງຢຶດຜະລິດຕະພັນທັງໝົດ ແລະ ປິດກິດຈະການ, ຟ້ອງຂຶ້ນສານ.

## ໝວດທີ VII
## ວ່າດ້ວຍການຈັດຕັ້ງປະຕິບັດ

**ມາດຕາ 17.** ມອບໃຫ້ກົມອາຫານ ແລະ ຢາຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 18.** ມີແຕ່ກົມອາຫານ ແລະ ຢາເທົ່ານັ້ນມີສິດອອກໃບທະບຽນສູດຕຳລາອາຫານ.

**ມາດຕາ 19.** ຂໍ້ກຳນົດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 25/11/1994

**ລັດຖະມົນຕີກະຊວງສາທາລະນະສຸກ**

**ດຣ. ຄຳພາຍ ລັດສະພີ**